# ການຊຳລະຄ່າພາສີທີ່ດິນຮູບແບບໃໝ່
# “ຜ່ານລະບົບທະນາຄານ”

ນັບແຕ່ໄດ້ເປີດໃຫ້ບໍລິການລະບົບຮັບຊຳລະຄ່າພາສີທີ່ດິນຜ່ານລະບົບທະນາຄານ ທົ່ວປະເທດໃນທ້າຍປີຜ່ານມາ ໂດຍໄດ້ຈັດພິທີເຊັນສັນຍາ ແລະ ເປີດໂຕການນຳໃຊ້ ລະຫວ່າງກົມສ່ວຍສາອາກອນ ກະຊວງການເງິນ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ພ້ອມດ້ວຍ ທະນາຄານຕົວແທນ 6 ທະນາຄານຢ່າງເປັນທາງການໃນວັນທີ 17 ທັນວາ 2018 ທີ່ ໂຮງແຮມລາວ ພລາຊາ, ນະຄອນຫຼວງວຽງຈັນ ເຫັນໄດ້ວ່າໄດ້ຮັບຄວາມສົນໃຈຈາກສັງຄົມຫຼາຍສົມຄວນ ເຊິ່ງປະຊາຊົນລາວໃນຂອບເຂດທົ່ວປະເທດແມ່ນສາມາດເສຍພາສີທີ່ດິນຜ່ານລະບົບທະນາຄານ *ໂດຍຜ່ານ BCEL i-Bank, BCEL One ແລະ ເຄົາເຕີ້ບໍລິການ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທຸກສາຂາທົ່ວປະເທດ ຫຼື ຜ່ານ Mobile Banking ແລະ ເຄົ້າເຕີ້ບໍລິການຂອງທະນາຄານຕົວແທນ ຫຼື ຜ່ານຕົວແທນຮັບຊຳລະຄ່າພາສີທີ່ດິນ.*

ສຳລັບທະນາຄານຕົວແທນໃນເບື້ອງຕົ້ນລວມມີ: ທະນາຄານພັດທະນາລາວ, ສົ່ງເສີມກະສິກຳ, ຮ່ວມທຸລະກິດລາວ-ຫວຽດ, ລາວ-ຈີນ , ຮ່ວມພັດທະນາ ແລະ ການຄ້າສາກົນ (BIC) ແລະ ຍັງຈະສືບຕໍ່ຮ່ວມມືກັບທະນາຄານອື່ນໆອີກ ໂດຍຈະແຈ້ງສັງຄົມຊາບເປັນແຕ່ລະໄລຍະ.

- **ທ່ານສາມາດຊຳລະຄ່າພາສີທີ່ດິນຜ່ານລະບົບທະນາຄານ ທົ່ວປະເທດຜ່ານ 3 ຊ່ອງທາງທີ່ສະບາຍ ແລະ ງ່າຍຕໍ່ການຊຳລະດັ່ງນີ້:**

1. **ຜ່ານ BCEL i-Bank, BCEL One ຂອງ ທຄຕລ ຫຼື Mobile Banking ຂອງທະນາຄານຕົວແທນ ດ້ວຍຕົວເອງ**
   - ເຂົ້າລະບົບ
   - ເຂົ້າຟັງຊັ້ນ “ຈ່າຍຄ່າໃບບິນ” (ສຳລັບ BCEL i-Bank)
   - ເລືອກເມນູ “ຊຳລະພາສີທີ່ດິນ” ແລະ ປະຕິບັດຕາມຂັ້ນຕອນແນະນຳ
   - ນຳ QR ທີ່ໄດ້ຈາກການຊຳລະໄປພິມໃບຮັບເງິນພາສີທີ່ດິນທີ່ປ່ອງບໍລິການ ທຄຕລ ຫຼື ທະນາຄານຕົວແທນ ຫຼື ຕູ້ພິມໃບຮັບເງິນພາສີທີ່ດິນອັດຕະໂນມັດ
2. **ຜ່ານປ່ອງບໍລິການ ທຄຕລ ແລະ ທະນາຄານຕົວແທນ**
   - ສາມາດຈ່າຍດ້ວຍເງິນສົດ ແລະ ບັນຊີ ກໍ່ໄດ້
3. **ຜ່ານຕົວແທນຮັບຊຳລະ**
   - ສາມາດຈ່າຍດ້ວຍເງິນສົດ

- **ເອກະສານທີ່ຕ້ອງແຈ້ງທີ່ປ່ອງບໍລິການເຄົາເຕີ້ຂອງທະນາຄານ ແລະ ຕົວແທນຮັບຊຳລະ** ເຊິ່ງປະກອບມີດັ່ງນີ້:
  1. ໃບຕາດິນ ແລະ ໃບເກັບເງິນພາສີທີ່ດິນຂອງປີຫຼ້າສຸດ; ຫຼື
  2. ໃບຢັ້ງຢືນສິດນຳໃຊ້ທີ່ດິນ ແລະ ໃບເກັບເງິນພາສີທີ່ດິນຂອງປີຫຼ້າສຸດ; ຫຼື
  3. ໃບຕິດຕາມເສຍພາສີທີ່ດິນ (ກໍລະນີບໍ່ມີໃບຕາດິນ ຫຼື ໃບຢັ້ງຢືນສິດນຳໃຊ້ທີ່ດິນ); ຫຼື
  4. ເອກະສານຢັ້ງຢືນຈາກຂະແໜງການຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ ຫຼື ພາກສ່ວນອື່ນໆທີ່ມີສິດອະນຸຍາດອອກໃຫ້ ແລະ ໃບເກັບເງິນພາສີທີ່ດິນຂອງປີຫຼ້າສຸດ.

ທ່ານສາມາດນຳໃຊ້ເອກະສານຂໍ້ໃດຂໍ້ໜຶ່ງທີ່ໄດ້ລະບຸຂ້າງເທິງນີ້ເພື່ອແຈ້ງຕໍ່ເຈົ້າໜ້າທີ່ທະນາຄານໃນເວລາຊຳລະຄ່າພາສີທີ່ດິນ ໂດຍສາມາດນຳໃຊ້ຕົ້ນສະບັບ ຫຼື ສຳເນົາກໍ່ໄດ້, ຫຼັງຈາກຊຳລະແລ້ວຈະໄດ້ຮັບໃບຮັບເງິນພາສີທີ່ດິນເພື່ອເປັນຫຼັກຖານຢັ້ງຢືນໃຫ້ແກ່ເຈົ້າຂອງດິນ. ກໍລະນີທີ່ທ່ານຊຳລະຜ່ານ **i-Bank, BCEL One ຂອງ ທຄຕລ ຫຼື Mobile Banking ຂອງທະນາຄານຕົວແທນ ດ້ວຍຕົວເອງ** ແມ່ນສາມາດຮັບໃບຮັບເງິນພາສີທີ່ດິນໄດ້ທີ່ເຄົາເຕີ້ບໍລິການຂອງທະນາຄານ ຫຼື ສະແກນຄິວອາໂຄດທີ່ຕູ້ພິມໃບຮັບເງິນພາສີທີ່ດິນອັດຕະໂນມັດໄດ້.

ການເປີດນຳໃຊ້ລະບົບຮັບຊຳລະຄ່າພາສີທີ່ດິນຮູບແບບໃໝ່ຜ່ານລະບົບທະນາຄານໃນຄັ້ງນີ້ຖືເປັນການຮ່ວມມືທີ່ດີອີກຄັ້ງ ລະຫວ່າງກົມສ່ວຍສາອາກອນ ກະຊວງການເງິນ ແລະ ທຄຕລ ພ້ອມດ້ວຍທະນາຄານຕົວແທນ ໃນການຈັດເກັບຄ່າພາສີທີ່ດິນໃນທົ່ວປະເທດ ສ້າງຄວາມສະດວກຕໍ່ປະຊາຊົນ ແລະ ພາກລັດ ສາມາດເກັບລາຍຮັບເຂົ້າງົບປະມານແຫ່ງລັດໄດ້ທັນເວລາ, ຖືກຕ້ອງ, ມີຄວາມໂປ່ງໃສ ແລະ ສາມາດກວດສອບຄືນໄດ້ ເຊິ່ງຊ່ວຍໃຫ້ການເກັບລາຍຮັບເຂົ້າງົບປະມານແຫ່ງລັດໃຫ້ມີປະສິດທິຜົນຍິ່ງຂຶ້ນ.

# ຮູ້ແລ້ວບໍ່?

# ຊຳລະຄ່າພາສີທີ່ດິນ

## ຜ່ານລະບົບ **ທະນາຄານ** ໄດ້ແລ້ວ...

- ຜ່ານເຄົາເຕີ້ບໍລິການ, i-Bank ແລະ One ຂອງ ທຄຕລ
- ຜ່ານປ່ອງບໍລິການ ແລະ Mobile Banking ຂອງ ທະນາຄານຕົວແທນ:
- ຜ່ານຕົວແທນຮັບຊຳລະຄ່າພາສີທີ່ດິນ




1555 | BCEL Bank | www.bcel.com.la

ສອບຖາມຂໍ້ມູນເພີ່ມຕື່ມ: Call center: 1555, Facebook: BCEL Bank, Website: www.bcel.com.la

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ